**ມິຊຊາອາທິດທີ 21 ກຳນົດທຳມະດາປີ C**

**ວັນທີ 25 ສິງຫາ 2019**



**ພຣະວໍລະສານໂດຍນັກບຸນລູກາ 13, 22-30**

ໃນເວລາທີ່ສະເດັດໄປນະຄອນເຢລູຊາແລມນັ້ນ, ພຣະເຢຊູເຈົ້າກໍໄດ້ເທດສະໜາສັ່ງສອນໄປຕາມບ້ານເມືອງທີ່ພຣະອົງຊົງຜ່ານໄປ. ມີຜູ້ໜຶ່ງທູນພຣະອົງວ່າ: ພຣະອາຈານ, ມີແຕ່ໜ້ອຍຄົນບໍທີ່ຈະໄດ້ຮອດ? ພຣະເຢຊູເຈົ້າຕອບວ່າ: ຈົ່ງພະຍາຍາມເຂົ້າທາງປະຕູແຄບເຖີດ. ເຮົາບອກພວກເຈົ້າວ່າ: ມີຫລາຍຄົນຢາກເຂົ້າທາງປະຕູນີ້ແຕ່ເຂົ້າບໍ່ໄດ້. ເມື່ອເຈົ້າເຮືອນຈະລຸກຂຶ້ນໄປອັດປະຕູແລ້ວ ພວກເຈົ້າຜູ້ຢູ່ນອກກໍຈະພາກັນເຄາະປະຕູເວົ້າວ່າ: ນາຍເອີຍ, ໄຂເອົາພວກຂ້ານ້ອຍແດ່. ເພິ່ນຈະຕອບພວກເຈົ້າວ່າ: ເຮົາບໍ່ຮູ້ຈັກພວກເຈົ້າມາແຕ່ໃສ. ແລ້ວພວກເຈົ້າຈະພາກັນເວົ້າວ່າ: ພວກຂ້ານ້ອຍໄດ້ກິນໄດ້ດື່ມກັບນາຍ. ນາຍເອງກໍໄດ້ເທດສະໜາສັ່ງສອນພວກຂ້ານ້ອຍຢູ່ຕາມທີ່ຊຸມນຸມຕ່າງໆ. ສ່ວນເຈົ້າເຮືອນກໍຈະຕອບວ່າ: ເຮົາບໍ່ຮູ້ຈັກພວກເຈົ້າມາແຕ່ໃສ. ພວກຄົນຊົ່ວທັງຫລາຍເອີຍ, ຈົ່ງພາກັນໜີໄປໄກໆ, ໄປຢູ່ບ່ອນທີ່ມີແຕ່ຮ້ອງໄຫ້ແລະກັດແຂ້ວກັດຟັນ.

ພວກເຈົ້າຈະໄດ້ເຫັນອາບຣາຮາມ, ອີຊາອັກ, ຢາກ໊ອບ, ແລະພວກປະພາສົກທັງຫລາຍຢູ່ໃນອານາຈັກຂອງພຣະເຈົ້າ.

ສ່ວນພວກເຈົ້ານັ້ນຕ້ອງຖືກໄລ່ໄປຢູ່ທາງນອກ. ຈະມີຄົນຈາກທິດຕາເວັນອອກ, ທິດຕາເວັນຕົກ, ທິດເໜືອທິດໃຕ້ມານັ່ງຮ່ວມກິນລ້ຽງໃນອານາຈັກຂອງພຣະເຈົ້າ. ແມ່ນແທ້, ພວກຢູ່ຫລັງຈະມາຢູ່ໜ້າ ແລະພວກຢູ່ໜ້າຈະມາຢູ່ຫລັງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 13, 22-30**

ພຣະເຢຊູເຈົ້າພ້ອມດ້ວຍລູກສິດກຳລັງເດີນທາງມຸ່ງສູ່ນະຄອນເຢລູຊາແລມແລະພຣະອົງເອງກໍບໍ່ຢຸດຢ່ອນທີ່ຈະເທດສະໜາສັ່ງສອນ. ອາດຈະແມ່ນພຣະອົງບໍ່ໄດ້ຮັບຕ້ອນໃນໂຮງທຳບ່ອນພຣະອົງຜ່ານໄປດັ່ງນັ້ນພຣະເຢຊູເຈົ້າຈຶ່ງເທດສອນຕາມບ້ານຕາມເມືອງຕ່າງໆ.

ໃນເວລາເທດສອນກໍມີຄົນຜູ້ໜຶ່ງຖາມພຣະເຢຊູເຈົ້າກ່ຽວກັບຈຳນວນຄົນທີ່ໄດ້ຮັບຄວາມຣອດ. ແທນທີ່ພຣະອົງຈະຕອບເຂົາວ່າ: ມີຈຳນວນຫລາຍ ຫລືໜ້ອຍ. ແຕ່ພຣະເຢຊູເຈົ້າພັດບອກເຂົາວິທີທີ່ຈະໄດ້ຣອດອັນແມ່ນຄວາມພະຍາຍາມເຂົ້າທາງປະຕູແຄບ. ໝາຍຄວາມວ່າແນວໃດ? ໝາຍວ່າຄວາມຣອດແມ່ນພຣະຄຸນພຣະເຈົ້າສຳລັບທຸກຄົນໂດຍບໍ່ຈຳແນກເຊື້ອຊາດ, ຊົນຊັ້ນ, ຄວາມເຊື່ອຖື ຫລືກຸ່ມຄົນໃດກຸ່ມຄົນໜຶ່ງ. ແຕ່ເພື່ອຈະໄດ້ຮັບຄວາມຣອດນັ້ນ, ແຕ່ລະຄົນຕ້ອງໄດ້ພະຍາຍາມເຂົ້າໃຈແລະປະຕິບັດຕາມສິ່ງທີ່ພຣະອົງບອກສອນ. ຍ້ອນຫຍັງ? ຍ້ອນມີຫລາຍຄົນໄດ້ຟັງວາຈາຂອງພຣະອົງ, ໄດ້ກິນ, ໄດ້ດື່ມຮ່ວມກັບພຣະອົງແຕ່ພຣະອົງບໍ່ຮູ້ຈັກພວກເຂົາ ແລະພວກເຂົາກໍບໍ່ໄດ້ເຂົ້າຮ່ວມໂຕະໃນອານາຈັກຂອງພຣະເຈົ້າ.ຍ້ອນພວກເຂົາບໍ່ໄດ້ທຳໃຫ້ວາຈານັ້ນມີຊີວິດໃນຊີວິດຂອງພວກເຂົາ. ດັ່ງນັ້ນ, ຜູ້ທີ່ເປັນພຣະອາຈານາດ, ພຣະເຢຊູເຈົ້າ, ພຣະອົງກໍບໍ່ຮູ້ຈັກພວກເຂົາແລະເປັນຕົ້ນພຣະອົງຈະບໍ່ໄຂປະຕູເພື່ອຮັບພວກເຂົາເຂົ້າໃນອານາຈັກຂອງພຣະອົງ.

ຈຸດນີ້ອາດເປັນຄຳຖາມສຳລັບພວກເຮົາແຕ່ລະຄົນຜູ້ເປັນລູກສິດຂອງພຣະເຢຊູເຈົ້າ, ຜູ້ເດີນຕາມພຣະອົງ, ຜູ້ໄດ້ຟັງວາຈາຂອງພຣະອົງ, ຜູ້ໄດ້ຮັບການລ້ຽງເກືອດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ. ພວກເຮົາໄດ້ຮູ້ຈັກພຣະອົງບໍ? ພວກເຮົາໄດ້ຈື່ຈຳສິ່ງທີ່ພຣະອົງບອກສອນພວກເຮົາບໍ? ພວກເຮົາໄດ້ພະຍາຍາມປະຕິບັດໃຫ້ເປັນຈິງສິ່ງທີ່ພຣະອົງສອນພວກເຮົາບໍ? ພວກເຮົາໄດ້ເຂົ້າທາງປະຕູແຄບບໍ? ແນ່ນອນ, ຖ້າພວກເຮົາບໍ່ຮູ້ຈັກພຣະເຢຊູເຈົ້າຜ່ານທາງວາຈາຂອງພຣະອົງ, ພຣະອົງກໍຈະບໍ່ຮູ້ຈັກພວກເຮົາເມື່ອເວລາພວກເຮົາເຄາະປະຕູຮ້ອງຫາພຣະອົງ. ແລະຖ້າພວກເຮົາບໍ່ເຂົ້າທາງປະຕູແຄບໝາຍວ່າທາງຄຳບອກສອນຂອງພຣະອົງ, ພວກເຮົາກໍຈະບໍ່ໄດ້ຮ່ວມໂຕະກັບພຣະອົງໃນອານາຈັກສະຫວັນ. ກົງກັນຂ້າມ, ຜູ້ບໍ່ໄດ້ຮັບສິນລ້າງບາບ, ບໍ່ໄດ້ຟັງຄຳເທດສອນຂອງພຣະອົງ, ບໍ່ໄດ້ຫລໍ່ລ້ຽງດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ, ແຕ່ເຂົາມີຊີວິດແລະການປະຕິບັດທີ່ສອດຄ່ອງກັບພຣະທຳບັນຍັດແຫ່ງຮັກຂອງພຣະເຈົ້າ. ແນ່ນອນ, ພຣະເຢຊູເຈົ້າຈະໄຂປະຕູຮັບເອົາເຂົາເຂົ້າຮ່ວມສຸກກັບພຣະອົງໃນເມືອງສະຫວັນ. ເພາະ « ຜູ້ຢູ່ຫລັງຈະມາຢູ່ໜ້າ ແລະຜູ້ຢູ່ໜ້າຈະມາຢູ່ຫລັງ ». ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ຊ່ວຍປຸກລຸກພວກເຮົາໃຫ້ຕື່ນຈາກຄວາມເລີນເລີ້, ຄວາມເຢັນຊາຕໍ່ການຟັງແລະການປະຕິບັດວາຈາຂອງພຣະເຈົ້າ. ເພື່ອພວກເຮົາຈະໄດ້ຫັນປ່ຽນຈາກການເຂົ້າທາງປະຕູໃຫຍ່ອັນແມ່ນຄວາມສະໜຸກສະບາຍຂອງໂລກ ໃຫ້ກັບເຂົ້າມາທາງປະຕູແຄບອັນແມ່ນຄວາມຮັກ, ຮັກພຣະເຈົ້າສຸດຈິດສຸດໃຈແລະຮັກຜູ້ອື່ນຄືຮັກຕົວພວກເຮົາເອງ. ເພື່ອພວກເຮົາທຸກຄົນຈະໄດ້ຣອດແລະເຂົ້າຮ່ວມງານລ້ຽງໃນອານາຈັກຂອງພຣະເຈົ້ານັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ